# ການກວດຫາໂຣກ COVID-19

ໃນປະຈຸບັນນີ້ ການກວດຫາໂຣກ COVID-19 ແມ່ນມີຫຼາຍແຫ່ງຢູ່ໃນລັດມິນນິໂຊຕາ.

ວິດີໂອນີ້ຈະອາທິບາຍໃຫ້ຮູ້ວ່າ ແມ່ນໃຜຄວນຈະໄປກວດ, ຈະກວດຢູ່ໃສ ແລະຮູ້ຜົນກວດໄດ້ແນວໃດ.

ໃຜຄວນຈະໄປກວດຫາໂຣກ COVID-19?

ບຸກຄົນໃດທີ່ມີອາການຄ້າຍຄືໂຣກ COVID-19 ຄວນຈະກວດເບິ່ງ.

ອາການຂອງໂຣກໂຄວິດນີ້ມີຄື: ເປັນໄຂ້, ໄອ, ຫາຍໃຈຖີ່, ປວດກ້າມເນື້ອ, ເຈັບຫົວ, ເຈັບຄໍ, ໄຂ້ໜາວສັ່ນ ຫຼື ບໍ່ໄດ້ ລົດຊາດອາຫານ ຫຼື ບໍ່ໄດ້ກິ່ນ.

ຖາມນໍາທ່ານໝໍຂອງທ່ານ, ຄລີນິກທ້ອງຖິ່ນ, ຫຼືໃຊ້ເຄື່ອງມືກວດກາທາງອິນເຕີເນັດຢູ່ໃນເວັບໄຊທ໌ Minnesota COVID Response ເພື່ອຈະໄດ້ຮູ້ວ່າທ່ານຄວນຈະໄດ້ຮັບການກວດຫຼືບໍ່.
ຂໍໃຫ້ຄົນໃນຄອບຄົວແລະຫມູ່ເພື່ອນຊ່ອຍເຫຼືອ ຖ້າທ່ານບໍ່ຮູ້ວິທີໃຊ້ເວບໄຊທ໌.

ຂ້າພະເຈົ້າຈະໄປກວດdຢູ່ໃສ?

ສ່ວນຫລາຍໂຮງໝໍຫຼືຄລີນິກ ຈະເກັບຕົວຢ່າງຂອງການກວດໄວ້ທີ່ຫ້ອງກວດດົວໃຈ.

ເພື່ອຊອກຫາສຖານທີ່ບ່ອນທີ່ທ່ານຈະໄປກວດ, ໃຫ້ໂທຫາທ່ານໝໍຂອງທ່ານ, ຄລີນິກທ້ອງຖິ່ນ, ຫຼືໄປເບິ່ງ ແຜນທີ່ກວດ ໃນເວັບໄຊທ໌ Minnesota COVID Response. ຂໍໃຫ້ຄົນໃນຄອບຄົວແລະຫມູ່ເພື່ອນຊ່ອຍ ເຫຼືອ ຖ້າທ່ານບໍ່ຮູ້ວິທີໃຊ້ເວບໄຊທ໌.

ກ່ອນຈະໄປກວດ, ໃຫ້ໂທຣສັບຖາມໄປ ເພື່ອຈະໄດ້ຮູ້ສຖານທີ່ ເພາະແຕ່ລະແຫ່ງຈະບໍ່ຄືກັນ.

ຂ້າພະເຈົ້າຮູ້ຜົນກວດໄດ້ຢ່າງໃດ?

ຄລີນິກທີ່ທ່ານໄປກວດນັ້ນ ຈະແຈ້ງມາໃຫ້ທ່ານຮູ້ ເຖິງຜົນການກວດ

ມັນອາດຈະໃຊ້ເວລາຫຼາຍວັນແດ່.

ຢ່າຕິດຕໍ່ ໄປທາງກະຊວງສາທາລະນະສຸກຂອງລັດມິນນິໂຊຕາ (Minnesota Department of Health) ເພື່ອຢາກຮູ້ ຮັບຜົນກວດ.

ຖ້າຢາກຈະຮຽນຮູ້ວິທີການກວດທາງ ອອນລາຍ ຫລືຢາກຮູ້ສະຖານທີ່ໄປກວດ, ຈົ່ງເຂົ້າເບິ່ງທີ່ mn.gov/covid19

Minnesota Department of Health
Communications Office
PO Box 64975 St. Paul, MN 55164-0975
health.communications@state.mn.us
www.health.state.mn.us
05/26/20 Testing for COVID-19 (Lao)
To obtain this information in a different format, call: 651-201-4989